**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ຫ້ອງການ ເລກທີ 528 [illegible] /ຫກ

ນະຄອນຫຼວງວຽງຈັນ, ວັນທີ 11/02/2026

## ແຈ້ງການ

**ເຖິງ:** ບັນດາຫົວໜ່ວຍແຮງງານ ແລະ ໂຄງການລົງທຶນ ຂອງພາກລັດ ແລະ ພາກທຸລະກິດ ທີ່ໄດ້ຮັບອະນຸຍາດເຄື່ອນໄຫວທຸລະກິດ ຢູ່ ສປປ ລາວ.

**ເລື່ອງ:** ການຂໍອະນຸຍາດແຜນນຳໃຊ້ຜູ້ອອກແຮງງານຕ່າງປະເທດ ເຂົ້າມາເຮັດວຽກຢູ່ຫົວໜ່ວຍແຮງງານ ແລະ ໂຄງການລົງທຶນພາຍໃນປະເທດ.

- ອີງຕາມ ກົດໝາຍວ່າດ້ວຍແຮງງານ (ສະບັບປັບປຸງ) ສະບັບເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013;
- ອີງຕາມ ກົດໝາຍວ່າດ້ວຍການຈັດຫາງານ ສະບັບເລກທີ 37/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ດຳລັດວ່າດ້ວຍຂໍ້ມູນ ຂ່າວສານ ຕະຫຼາດແຮງງານ ສະບັບເລກທີ 02/ລບ, ລົງວັນທີ 07 ມັງກອນ 2022;
- ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະດຸ່ນດ່ຽງທາງດ້ານການສະໜອງແຮງງານ ສະບັບເລກທີ 48/ນຍ, ລົງວັນທີ 15 ມີນາ 2024.

ຫ້ອງການ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຂໍແຈ້ງການມາຍັງ ບັນດາຫົວໜ່ວຍແຮງງານ ແລະ ໂຄງການລົງທຶນ ຂອງພາກລັດ ແລະ ພາກທຸລະກິດ ທີ່ໄດ້ຮັບອະນຸຍາດເຄື່ອນໄຫວທຸລະກິດ ຢູ່ ສປປ ລາວ ທີ່ມີຄວາມຕ້ອງການແຜນນຳໃຊ້ຜູ້ອອກແຮງງານຕ່າງປະເທດ ຊາບວ່າ:

ເພື່ອເປັນການດັດສົມມະຫາພາກດ້ານແຮງງານ ລະຫວ່າງ ຄວາມຕ້ອງການ ແລະ ການສະໜອງແຮງງານ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງຫົວໜ່ວຍແຮງງານ ແລະ ໂຄງການລົງທຶນ ຂອງພາກລັດ ແລະ ພາກທຸລະກິດ ພາຍໃນປະເທດ ໃນການສົ່ງເສີມການຂະຫຍາຍຕົວທາງດ້ານເສດຖະກິດພາຍໃນປະເທດ ໃຫ້ມີຄວາມໝັ້ນຄົງນັ້ນ ຖ້າຫາກຫົວໜ່ວຍແຮງງານ ແລະ ໂຄງການລົງທຶນ ຂອງພາກລັດ ແລະ ພາກທຸລະກິດໃດ ເຫັນວ່າ ມີຄວາມຈຳເປັນ ແລະ ຕ້ອງການແຜນນຳໃຊ້ຜູ້ອອກແຮງງານຕ່າງປະເທດ **ຈຳນວນ 50 ຄົນຂຶ້ນໄປ** ຕ້ອງໄດ້ກຳນົດແຜນຄວາມຕ້ອງການຢ່າງລະອຽດ ແລະ ຊັດເຈນ ກ່ຽວກັບຂໍ້ມູນການຈ້າງງານ ແລະ ສະຫວັດດີການ ໃຫ້ອີງການຄຸ້ມຄອງການຈັດຫາງານ ແລະ ຈັດປະຊຸມປຶກສາຫາລື ຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າພິຈາລະນາຄວາມຈຳເປັນດັ່ງກ່າວ ໃນການວາງແຜນສ້າງ ແລະ ສະໜອງແຮງງານ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ຢ່າງຖືກຕ້ອງ ແລະ ທັນສະພາບການ. ສະນັ້ນ, ຈຶ່ງມີຄວາມຈຳເປັນແຈ້ງມາຍັງ ບັນດາຫົວໜ່ວຍແຮງງານ ແລະ ໂຄງການລົງທຶນ ຂອງພາກລັດ ແລະ ພາກທຸລະກິດ ທີ່ໄດ້ຮັບອະນຸຍາດເຄື່ອນໄຫວທຸລະກິດ ຢູ່ ສປປ ລາວ ໃນການປະກອບເອກະສານ **ແຜນຄວາມຕ້ອງການນຳໃຊ້ຜູ້ອອກແຮງງານຕ່າງປະເທດ** ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງດ້ວຍ.

ດັ່ງນັ້ນ, ຈຶ່ງອອກແຈ້ງການມາຍັງທ່ານ ເພື່ອຊາບ ແລະ ເລີ່ມຈັດຕັ້ງປະຕິບັດນັບແຕ່ ວັນທີ 11 ກຸມພາ 2026 ເປັນຕົ້ນໄປ.

**ຫົວໜ້າຫ້ອງການ**

ຫ້ອງການ

**ດວງສີ ທຳມະວົງ**

ກົມການຈັດຫາງານ, ພະແນກນະໂຍບາຍການຈັດຫາງານ 021 213011